# ການນຳເຂົ້າອາຫານ ແລະ ຜະລິດຕະພັນ ກະສິກຳເຂົ້າ ສະຫະຣັຖ

ມີສັດຕູພືດ ແລະ ພະຍາດທາງກະສິກຳຢ່າງຫຼວງຫຼາຍຢູ່ໃນທົ່ວໂລກທີ່ສາມາດເຂົ້າມາໃນສະຫະຣັຖ ໂດຍຜ່ານສິນຄ້າຕ່າງໆເຊັ່ນ ຊີ້ນ, ສັດ, ຜະລິດຕະພັນ ຈາກສັດ, ໝາກໄມ້, ຜັກ, ພືດ, ດິນ, ເມັດພັນ, ແລະ ຫັດຖະກຳຈາກພືດທີ່ຢູ່ ປົນກັບຄ້າຕ່າງໆ. ຍ້ອນເຫັນຄວາມສ່ຽງນີ້ທາງ ກົມກະສິກຳແຫ່ງສະຫະຣັຖ (U.S. Department of Agriculture's - USDA) ໜ່ວຍບໍລິການກວດສອບ ສຸຂະພາບສັດ ແລະ ພືດ (the Animal and Plant Health Inspection Service - APHIS) ໄດ້ອອກກົດລະບຽບສຳຫຼັບສຳຫັບຜະລິດຕະພັນກະສິກຳໂດຍສະເພາບາງປະເພດຈາກຕ່າງປະເທດທີ່ຈະນຳເຂົ້າສະຫະຣັຖ.

ກ່ອນຈະນຳເຂົ້າ ຫຼື ເອົາສິ່ງຂອງເຫຼົ່ານີ້ຈາກຜູ້ນຳເຂົ້າ ຫຼື ນາຍໜ້າ, ທ່ານຕ້ອງຊອກຮູ້ກ່ອນວ່າມີຂໍ້ກຳນົດຫຍັງແນ່ກ່ຽວກັບສິ່ງຂອງເຫຼົ່ານີ້. ການຊອກຮູ້ຂໍ້ກຳນົດນີ້ສາມາດຊ່ວຍທ່ານເຮັດໃຫ້ຄວາມສັບສົນມີໜ້ອຍທີ່ສຸດ, ປ້ອງກັນຄ່າເສຍຫາຍທີ່ເກີດຈາກຄວາມຊັກຊ້າ, ແລະ ຫຼີກລ່ຽງການຖືກລົງໂທດ ແລະ ການເສຍສິນຄ້າ.

## ຂໍ້ມູນທົ່ວໄປ

ກົມພາສີເພື່ອຄວາມໝັ້ນຄົງຂອງຊາດ ແລະ ປົກປ້ອງເຂດແດນ (The U.S. Department of Homeland Security's Customs and Border Protection - CBP) ເປັນຜູ້ບັງຄັບໃຊ້ກົດລະບຽບຂອງ APHIS ໃນທ່ານເຮືອຂາເຂົ້າ. ຜູ້ຊ່ຽວຊານທາງກະສິກຳຂອງ CBP ຈະກວດສອບສິນຄ້ານຳເຂົ້າເພື່ອຮັບປະກັນວ່າໃບອະນຸຍາດທີ່ກຳນົດ, ໃບຮັບປະກັນສຸຂະອະນາໄມ (ສຳຫຼັບຜະລິດຕະພັນປະເພດສັດ), ແລະ ໃບຮັບປະກັນຄວາມສຸຂະອະນາໄມພືດ (ສຳຫຼັບຜະລິດພືດ) ມີມາພ້ອມກັບສິນຄ້າທີ່ຂົນມາ.

ໃບຮັບປະກັນສຸຂະອະນາໄມ ແລະ ສຸຂະອະນາໄມພືດແມ່ນເອກະສານທາງ ກົດໝາຍທີ່ອອກໂດຍປະເທດສົ່ງອອກເພື່ອຮັບປະກັນວ່າການສົ່ງສິນຄ້າໄດ້ມາດຕະຖານສຸຂະພາບສັດ ແລະ ພືດຂອງສະຫະຣັຖ. ຕົວຢ່າງ, ໃບຮັບປະ ກັນສຸຂະອະນາໄມພືດອາດຈະຮັບປະກັນການວ່າມີການຮົມຄວັນທີ່ແນ່ນອນ ຫຼື ວ່າໄດ້ມີການກວດສອບສິນຄ້າກ່ອນການສົ່ງອອກ ແລະ ບໍ່ພົບສັດຕູພືດ ຫຼື ພະຍາດທີ່ໜ້າຫ່ວງໃຍ.

ຜູ້ນຳເຂົ້າຄວນຈື່ໄວ້ວ່າທາງ APHIS ໄດ້ຄວບຄຸມສິນຄ້າກ່ຽວກັບພືດ ແລະ ສັດ, ລວມທັງຜະລິດຕະພັນທີ່ໄດ້ຈາກພືດແລະ ສັດ, ຕົວຢ່າງ, ເມັດພັນສຳຫຼັບປູກ ແລະ ເມັດພັນທີ່ໃຊ້ຕົກແຕ່ງສິນຄ້າຫັດຖະກຳຕ່າງກໍ່ແມ່ນສິນຄ້າໃນການຄວບ ຄຸມ. ເພື່ອນຳເຂົ້າສະຫະຣັຖຢ່າງຖືກກົດໝາຍ, ເຖິງຈະເປັນຜະລິດຕະພັນທີ່ ຜ່ານຂັ້ນຕອນທາງການຄ້າແລະ ຫຸ້ມຫໍ່ແລ້ວຕ້ອງມີໃບອະນຸຍາດ ຫຼື ເອກະສານຈາກປະເທດທີ່ສົ່ງອອກ, ເພື່ອຢັ້ງຢືນວ່າໄດ້ມາດຕະຖານສຸຂະພາບສັດ ແລະ ພືດຂອງສະຫະຣັຖ. ຜູ້ນຳເຂົ້າຍັງຄວນຈະຕື່ນຕົວອີກວ່າ ຜະລິດຕະພັນຈາກຈາກປະເທດສະເພາະໃດໜຶ່ງ ຫຼື ຂົງເຂດສະເພາະໃດໜຶ່ງບໍ່ສາມາດນຳເຂົ້າໄດ້ເລີຍເນື່ອງຈາກມີແມງໄມ້ ຫຼື ພະຍາດທີ່ບໍ່ມີໃນສະຫະຣັຖ.

## ພືດ ແລະ ຜະລິດຕະພັນຈາກພືດ

ເພື່ອຫາຂໍ້ມູນກ່ຽວກັບຂໍ້ກຳນົດການນຳເຂົ້າພືດ ແລະ ຜະລິດຕະພັນຈາດພືດ ສະເພາະໃດໜຶ່ງ ເຂົ້າໄປຖານຂໍ້ມູນຂໍ້ກຳນົດການນຳເຂົ້າໝາກໄມ້ ແລະ ຜັກ (Fruits and Vegetables Import Requirements - FAVIR) ຂອງ APHIS ທີ່ www.aphis.usda.gov/favir/. ຖານຂໍ້ມູນ FAVIR ເຮັດໃຫ້ລູກຄ້າຊອກຂໍ້ມູນກ່ຽວກັບໝາກໄມ້ ແລະ ຜັກ ຕາມປະເພດສິນຄ້າ ຫຼື ປະເທດ, ໃຫ້ຂໍ້ມູນທີ່ວ່ອງໄວ ແລະ ງ່າຍສຳຫຼັບລູກຄ້າເພື່ອຫາຂໍ້ກຳນົດພື້ນຖານສຳຫຼັບຜະລິດຕະພັນສະເພາະ.

ພຽງແຕ່ເລືອກປະເພດໝາກໄມ້ ຫຼື ຜັກໃນບອນ"ຊື່ທີ່ໄດ້ຮັບການອະນຸມັດ" ("Approved Name") ແລະເລືອກປະເທດຕົ້ນທາງ ໃນບອນ"ປະເທດ/ຂົງເຂດ" "Country/Region"). ຈາກນັ້ນທ່ານຈະໄດ້ຮັບຜົນດັ່ງນີ້:

- "ພົບ0 ຂໍ້ "("0 entries found") - ນີ້ໝາຍຄວາມວ່າໝາກໄມ້ ຫຼື ຜັກນັ້ນບໍ່ ໄດ້ຮັບອະນຸຍາດໃຫ້ນຳເຂົ້າສະຫະຣັຖ
- " ພົບ# ຂໍ້" ("# entry(ies)) [ຕໍ່ດ້ວຍຊື່ຂອງສິນຄ້າ ແລະ ຊື່ປະເທດ]." ຖ້າຂໍ້ຄວາມນີ້ປະກົດໃຫ້ກົດ"CIR" ເພື່ອເບິ່ງລາຍງານການນຳເຂົ້າຂອງສິນຄ້າ.
  - o ຖ້າຂໍ້ກຳນົດການນຳເຂົ້າເວົ້າວ່າ"1 ລາຍການຕ້ອງກວດສອບ …", ("1 Subject to Inspection…",) ໝາຍຄວາມວ່າໝາກໄມ້ ຫຼື ຜັກໄດ້ຮັບການອະນຸຍາດໃຫ້ນຳເຂົ້າສະຫະຣັຖຂຶ້ນກັບການກວດສອບ
  - o ຖ້າໃນຂໍ້ກຳນົດການນຳເຂົ້າເວົ້າວ່າ "ເງື່ອນໄຂຂອງການຮັກສາ", "Condition of entry treatment," ໝາຍຄວາມວ່າໝາກໄມ້ ຫຼື ຜັກ ຕ້ອງໄດ້ມີການຮັກສາພິເສດໃນທ່າເຮືອທີ່ເຂົ້າເພື່ອຈະນຳເຂົ້າສະຫະຣັຖ.

APHIS ເຮັດຂໍ້ກຳນົດການນຳເຂົ້າພືດ ແລະ ຜະລິດຕະພັນຈາກພືດ, ລວມທັງ ພືດເພື່ອການປູກ (ເຊັ່ນ ເບ້ຍໄມ ແລະ ເມັດພັນລ໋ອດນ້ອຍ); ຜະລິດຕະພັນກະສ ກຳ (ເຊັ່ນ ໄມ້ທ່ອນ, ຝ້າຍ ແລະ ດອກໄມ້ທີ່ຕັດແລ້ວ); ເຄື່ອງຫັດຖະກຳທີ່ເຮັດຈາກ ພາກສ່ວນຂອງພືດ (ເຊັ່ນ ກະຕ່າ), ພືດຄຸ້ມຄອງ ແລະ ຜະລິດຕະພັນຈາກພືດ (ເຊັ່ນ ດອກກ້ວຍໄມ້), ແລະ ພັນພືດທີ່ຖືກຄຸກຄາມ ແລະ ເປັນອັນຕະລາຍ.

ເພື່ອນຳເຂົ້າໝາກໄມ້ ແລະ ຜັກ, ພືດ, ເມັດພັນ, ແລະ ຜະລິດຕະພັນຈາກພືດ ຈາກຕ່າງປະເທດ, ຜູ້ນຳເຂົ້າຕ້ອງຍື່ນຄຳຮ້ອງເພື່ອຂໍອະນຸຍາດນຳເຂົ້າກຳສິກຳ ຈາກ APHIS ແລະ ເອົາໃບຮັບປະກັນສຸຂະອານະໄມພືດຈາກປະເທດສົ່ງອອກ. ໃບຮັບ ປະກັນພັນພືດເປັນການບອກວ່າພືດໄດ້ຮັບການກັກກັນຢ່າງເປັນທາງການຈາກປະ ເທດສົ່ງອອກເພື່ອກວດສອບພືດຫາສັດຕູພືດ ແລະ ພະຍາດກ່ອນການສົ່ງອອກ. ໃບຮັບປະກັນຍັງລະບຸຊື່ພືດໂດຍຊື່ທາງ ວິທະຍາສາດ ແລະ ຢືນຢັນວ່າການ ສົ່ງສິນ ຄ້າຖືກຕ້ອງຕາມກົດລະບຽບສະຫະຣັຖສຳຫຼັບການນຳເຂົ້າ.

ຜູ້ນຳເຂົ້າຂອງສະຫະຣັຖ ຄວນເອົາໃບອະນຸຍາດທາງກະສິກຳເພື່ອ ການຂົນສິ່ງລວງ ໜ້າໃຫ້ຫຼາຍກ່ອນການ ຂົນສິ່ງ. ເພື່ອຂໍໃບນຳເຂົ້າ, ຕິດຕໍ່ APHIS ທີ່:

USDA-APHIS, ໜ່ວຍງານປ້ອງກັນ ແລະ ອະນຸຍາດກັກກັນພືດ
(Plant Protection and Quarantine Permit Unit)
4700 River Road, Unit 133
Riverdale, MD 20737
ໂທລະສັບ: (877) 770-5990 or (301) 851-2046
ອີເມລ໌: permits@aphis.usda.gov
www.aphis.usda.gov/plant_health/permits/index.shtml

## ຊີ້ນ, ຜະລິດຕະພັນຈາກສັດ ແລະ ຜະລິດຕະພັນຂັ້ນສອງ, ແລະ ສັດມີຊີວິດ

APHIS ໄດ້ອອກຂໍ້ກຳນົດການນຳເຂົ້າຊີ້ນ, ຜະລິດຕະພັນຈາກສັດ ແລະຜະລິດ ຕະພັນຂັ້ນສອງ, ແລະ ສັດມີຊີວິດ ເພື່ອຮັບປະກັນວ່າພະຍາດຂອງ ສັດທີ່ທີ່ແປກປະຫຼາດຈະບໍ່ເຂົ້າ ມາໃນສະຫະຣັຖ. ອາດຈະຕ້ອງມີໃບອະນຸຍາດຈາກສັດຕະວະ ແພດເພື່ອນຳເຂົ້າຊີ້ນ ແລະ ຜະລິດຕະພັນຈາກຊີ້ນປະເພດ ສະເພາະໃດໜຶ່ງ (ເຊັ່ນ ຊີ້ນ ແລະ ອາຫານທີ່ກຽມແລ້ວ), ສັດປີກ, ນົມ, ໄຂ່ ແລະ ຜະລິດຕະພັນນົມ (ຍົກເວັ້ນເນຍ ແລະ ຊີສ)ຈາກປະເທດທີ່ມີພະ ຍາດປະສຸສັດທີ່ແປກປະຫຼາດເຂົ້າ ມາສະຫະຣັຖ. ການນຳເຂົ້າຜະລິດຕະພັນອາຫານເຖິງຈະປ ະກອບມີຊີ້ນພຽງເລັກ ນ້ອຍ, ສັດປີກ, ຫຼື ໄຂ່ທີ່ຜ່ານຂັ້ນຕອນ ເປັນສ່ວນປະສົມອາດຈະຕ້ອງໄດ້ ຂໍການອະນຸຍາດເຊັ່ນດຽວກັນ. ນອກຈາກນີ້ ໜ່ວຍບໍລິການຄວາມປອດໄພທາງ ອາຫານ ແລະ ການກວດສອບ (Food Safety and Inspection Service - FSIS)ຂອງ USDA's ຍັງໄດ້ອອກຂໍ້ກຳນົດການນຳເຂົ້າຊີ້ ນ, ສັດປີກ, ແລະ ຜະ ລິດຕະພັນໄຂ່ເພື່ອການບໍລິໂພກ ຂອງຄົນ. ເມື່ອນຳເຂົ້າມາສະຫະຣັຖ, ຜະລິດ ຕະພັນເຫຼົ່ານີ້ໃບຮັບປະກັນສຸຂະ ພາບທີ່ໄດ້ຕາມຂໍ້ກຳນົດທາງທັງຂໍ້ກຳນົດທາງສຸຂະພາບສັດຂອງ APHIS ແລະ ຂໍ້ກຳນົດທາງສຸຂະພາບສາທາລະນະຂອງ FSIS.

ຜູ້ນຳເຂົ້າສາມາດກວດສອບລາຍຊື່ປະເທດທີ່ມີສິດ ແລະ ຜະລິດຕະພັນ ໄດ້ທີ່ www.fsis.usda.gov/pdf/Countries_Products_Eligible_for_Export. pdf.

ເພື່ອເບິ່ງຂໍ້ກຳນົດທົ່ວໄປການນຳເຂົ້າຂອງສະຫະຣັຖ ສຳຫຼັບ ຜະລິດຕະພັນສັດ ແລະ ສັດມີຊີວິດເຂົ້າໄປເວັບໄຊທ໌ຂອງໜ່ວຍບໍລິ ການສັດຕະວະແພດ ຂອງ APHIS ທີ່ www.aphis.usda.gov/import_export/animals/ animal_import/animal_imports.shtml.

ຜູ້ນຳເຂົ້າຍັງສາມາດຕິດຕໍ່ສູນແຫ່ງຊາດເພື່ອການນຳເຂົ້າແລະ ສົ່ງອອກ (National Center for Import and Export - NCIE) ຂອງ APHIS' ເພື່ອ ຂໍຂໍ້ມູນເພີ່ມເຕີມໄດ້ທີ່:

USDA-APHIS-NCIE
4700 River Road, Unit 39
Riverdale, MD 20737
ໂທລະສັບ: (301) 851-3300, option 5
ໂທລະສານ: (301) 734-8226
ອີເມລ໌: AskNCIE.Products@aphis.usda.gov

APHIS ຍັງໄດ້ອອກຂໍ້ກັບນົດການນຳເຂົ້າປະສຸສັດທຸກປະ ເພດ (ເຊັ່ນ: ງົວ ຄວາຍ, ໝູ,ແກະ, ແບ້, ມ້າ ແລະ ສັດປີກ), ລວມທັງສັດທີ່ບໍ່ແມ່ນປະສຸສັດ. ໃບອະນຸຍາດນຳເຂົ້າຂອງUSDA ອາດຈະຕ້ອງມີສຳຫຼັບສັດມີຊີວິດເຫຼົ່ານີ້. ນອກຈາກນີ້, ໃບຮັບປະກັນສຸ ຂະພາບໂດຍທົ່ວໄປແມ່ນຕ້ອງມີສຳຫຼັບສັດທັງໝົດ ທີ່ຢູ່ ໃນຂໍ້ກຳນົດຂອງ APHIS ທັງທີ່ນຳເຂົ້າ ຫຼື ຂົນສົ່ງຜ່ານສະຫະຣັຖໄປປະເທດ ອື່ນ. ການກັກກັນເມື່ອມາຮອດ ຫຼື ຫຼັງມາຮອດອາດຈະຕ້ອງມີສຳຫຼັບສັດ ບາງປະເພດ.

ຫ້ອງການ APHIS ຕັ້ງຢູ່ທຸກຣັຖ ແລະ ສາມາດໃຫ້ຄວາມຊ່ວຍເຫຼືອ ເພີ່ມເຕີມກ່ຽວ ກັບການນຳເຂົ້າສັດມີຊີວິດ. ສຳຫຼັບລາຍຊື່ຫ້ອງການ APHIS ແລະ ຂໍ້ມູນເພີ່ມ ເຕີມກ່ຽວກັບປະເພດຂອງສັດທີ່ ມີໃນຂໍ້ກຳນົດ, ການຂໍໃບອະນຸຍາດ, ແລະ ຂໍ້ກຳນົດອື່ນໆ, ເຂົ້າມາເວັບໄຊທ໌ຂອງພວກເຮົາທີ່ www.aphis.usda.gov/import_export/ animals/animal_import/animal_imports.shtml.

## ລະບົບອະນຸຍາດທາງອອນໄລ - ePermits

APHIS ຍັງມີລະບົບອະນຸຍາດທາງອອນໄລ, ເຄື່ອງມືທາງເວັບໄຊທ໌ທີ່ຊ່ວຍໃຫ້ ຜູ້ນຳເຂົ້າຂໍໃບອະນຸຍາດ, ກວດສອບສະຖານະພາບ ແລະ ເບິ່ງໄດ້ທາງອິນເຕີເນັດ. ລະບົບນີ້ ເຮັດໃຫ້ເວລາໃນການເຮັດໃບຂໍອະນຸຍາດ, ຂັ້ນຕອນທາງຂໍ້ມູນ ແລະ ອອກ ໃບອະນຸຍາດໜ້ອຍລົງ. ເພື່ອຊອກຂໍ້ມູນວ່າຈະຂໍອະນຸຍາດທ າງອອນໄລແນວໃດ, ກະລຸນາເຂົ້າມາທີ່ www.aphis.usda.gov/permits/learn_epermits.shtml. ເພື່ອລົງທະບຽນກັບລະບົບ ອະນຸຍາດທາງອອນໄລໄປທີ່ www.aphis. usda.gov/permits/eauth_epermits.shtml.

(*ໝາຍເຫດສຳຫຼັບຜູ້ນຳເຂົ້າ:* ການນຳເຂົ້າໂດຍສະ ເພາະຢ່າງໃດນຶ່ງອາດຕ້ອງຮັບການ ອະນຸຍາດຈາກຣັຖ ຫຼື ເອກະສານອື່ນໆຈາກໜ່ວຍງານກະສິກຳ, ປາ ແລະ ສັດປ່າ, ຫຼື ສະພາບແວດລ້ອມ ທ້ອງຖິ່ນ. ນອກຈາກນີ້ ໜ່ວຍງານຣັຖ ຍັງອາດຕ້ອງມີການ ອະນຸ ຍາດເພີ່ມເຕີມ.)

## ການລັກລອບຂົນເຄື່ອງກະສິກຳ ແລະ ການຮອງຮຽນທາງການຄ້າ

ໃນແຕ່ລະປີ, ມູນຄ່າຂອງການລັກລອບຂົນ ແລະ ການນຳເຂົ້າຜະລິດຕະພັນກະສິ ກຳທີ່ບໍ່ຖືກຕ້ອງເຂົ້າມາໃນສະຫະ ຣັຖໄດ້ເພີ່ມຂຶ້ນ. ເພື່ອແກ້ໄຂບັນຫານີ້ທາງ APHIS ໄດ້ເຮັດວຽກເພື່ອ ຊອກຫາການເຂົ້າມາແບບຜິດກົດໝາຍ ແລະ ການແຈກຢາຍຜະລິດ ຕະພັນທາງກະສິກຳທີ່ຕ້ອງຫ້າມ. ຜະລິດຕະພັນເຫຼົ່ານີ້ອາດເປັນສັດຕູ ພືດ ແລະ ສັດທີ່ ແປກປະຫຼາດ, ພະຍາດ, ຫຼື ປະເພດປະ ເພດສັດທີ່ແຜ່ລະບາດທີ່ສາມາດທຳລາຍພືດ ຜົນ, ປະສຸສັດ ແລະ ສະພາບແວດລ້ອມຂອງອາເມລິກາ.

ເຈົ້າໜ້າທີ່ຂອງ APHIS ໄດ້ກວດສອບນຳຕະຫຼາດ ແລະ ຮ້ານໃນທ້ອງຖິ່ນ ໃນທົ່ວ ປະເທດ ແລະ ຕິດຕາມການຄ້າໃນອິນເຕີເນັດ ເພື່ອຊອກຫາສິນຄ້າທາງກະສິກຳທີ່ ຕ້ອງຫ້າມ. ຖ້າເຈົ້າໜ້າທີ່ພົບເ ຫັນຜະລິດຕະພັນທີ່ນຳເຂົ້າຢ່າງຜິດກົດໝາຍ ຫຼື ຜິດກົດ ຂໍ້ກຳນົດ. APHIS ອາດຍຶດເຄື່ອງນັ້ນ ແລະ ດຳເນີນຄະດີທາງແພ່ງ ແລະ ອາຍາ ຖ້າໄດ້ຮັບການອະນຸມັດ.

ດ້ວຍເຫດນີ້, ຈຶ່ງເປັນເລື່ອງສຳຄັນສຳຫຼັບຜູ້ຈັດຈຳໜ່າຍ ແລະເຈົ້າຂອງຕະຫຼາດທີ່ຈະ ສັ່ງຜະລິດຕະພັນທີ່ນຳເຂົ້າ ມາຢ່າງຖືກກົດໝາຍ. ເຊັ່ນດຽວກັນມັນເປັນເລື່ອງສຳຄັນ

ທີ່ຈະຕ້ອງຮັກສາເອກະສານຂົນສົ່ງ ແລະ ໃບກຳກັບສິນຄ້າ ທີ່ກ່ຽວຂ້ອງກັບສິນຄ້າທາງ ກະສິກຳ. ຖ້າຫາກຜູ້ຂາຍບໍ່ຮູ້ ວ່າພວກເຂົາຂາຍສິນຄ້າຕ້ອງຫ້າມ, ເຈົ້າໜ້າທີ່ຂອງ APHIS ທີ່ເຮັດວຽກປະຈຳບ່ອນນັ້ນຈະອະທິບາຍ ຂໍ້ກຳນົດຂອງຣັຖບານກາງ ແລະ ເລີ່ມຕິດຕາມການນຳເຂົ້າເພື່ອຊອກຫາເສັ້ນທາງທີ່ຜິດກົດໝາຍ.

ເຈົ້າຂອງຕະຫຼາດ ຄວນລາຍງານການສົງໃສການລັກລອບຂົນ ຜະລິດຕະພັນທາງກະສິກຳໃຫ້ APHIS ສຳຫຼັບຂໍ້ມູນເພີ່ມເຕີມກ່ຽວ ກັບຄວາມ ພະຍາຍາມຂອງ APHIS ເພື່ອປ້ອງກັນການເຂົ້າ ແລະ ຈຳໜ່າຍຜະລິດຕະພັນ ທາງກະສິກຳທີ່ຕ້ອງຫ້າມກະລຸນາໂທມາທີ (800) 877-3835 ຫຼືໄປທີ່ www.aphis.usda.gov/international_safeguarding.

---

USDA ຜູ້ໃຫ້ບໍລິການ ແລະ ນາຍຈ້າງທີ່ໃຫ້ໂອກາດທີ່ເທົ່າທຽມ.